## ການບໍລິການທີ່ມີ ໃຫ້ກ່ອນທີ່ຈະເຂົ້າເກນຈຳນວນເງິນທີ່ທ່ານຕ້ອງຈ່າຍກ່ອນ

**ແຜນປະກັນທັ**ງໝົດຈະຈ່າຍເງິນສຳລັບການດູແລເບິ່ງແຍງແບບປ້ອງກັນກ່ອນທີ່ຈະເຂົ້າເກນຈຳນວນເງິນທີ່ທ່ານຕ້ອງຈ່າຍກ່ອນ.

**ແຜນປະກັນ Cascade Care** ຈະຈ່າຍເງິນສຳລັບການບໍລິການຫຼາຍຂຶ້ນ ກ່ອນທີ່ຈະເຂົ້າເກນຈຳນວນເງິນທີ່ທ່ານຕ້ອງຈ່າຍກ່ອນ. ການບໍລິການເຫຼົ່ານີ້ລວມເຖິງ:

- ການດູແລເບິ່ງແຍງແບບປ້ອງກັນ
- ການເຂົ້າພົບທ່ານໝໍດູແລເບິ່ງແຍງຫຼັກເພື່ອປິ່ນປົວອາການເຈັບປ່ວຍ ຫຼື ອາການບາດເຈັບ
- ການບໍລິການສຸຂະພາບຈິດ
- ການກຳກັບຢາທົ່ວໄປ
- ການດູແລເບິ່ງແຍງທີ່ຮີບດ່ວນ, ເມື່ອທ່ານຕ້ອງການການດູແລເບິ່ງແຍງໃນທັນທີ ແຕ່ບໍ່ມີອາການສຸກເສີນ ເຊັ່ນ: ພາວະຫົວໃຈວາຍ.

## ຂ້າພະເຈົ້າຈະລົງທະບຽນໄດ້ແນວໃດ?

### ໂທ

**1-855-923-4633**
**TTY/TDD: 1-855-627-9604**
**ຊົ່ວໂມງ: 7:30 ເຊົ້າ ຫາ 5:30 ແລງ**
*ການຊ່ວຍເຫຼືອແມ່ນມີໃຫ້ຫຼາຍກວ່າ 200 ພາສາ.*

### ພົບພົບ

**ນັດໝາຍກັບແຫຼ່ງຊ່ວຍເຫຼືອທີ່ໄວ້ໃຈໄດ້ໃນຊຸມຊົນຂອງທ່ານ.**

**ຊອກຫາຜູ້ນຳທາງການດູແລເບິ່ງແຍງສຸຂະພາບ ຫຼື ນາຍໜ້າເພື່ອຊ່ວຍທ່ານທາງອອນລາຍທີ່ wahealthplanfinder.org. ຄລິກໃສ່ປຸ່ມ ຂໍການຊ່ວຍເຫຼືອ.**

### ເຂົ້າເບິ່ງ

**ສະແກນລະຫັດ QR ເຂົ້າເບິ່ງໜ້າເວັບທີ່: wahealthplanfinder.org**

# ປະກັນສຸຂະພາບແມ່ນເປີດໃຫ້ແກ່ທຸກຄົນ!

**ທຸກຄົ**ນທີ່ອາໄສໃນລັດວໍຊິງຕັນສາມາດຊື້ປະກັນສຸຂະພາບ ແລະ ແຂ້ວຜ່ານ *Washington Healthplanfinder.*



ຍິນດີຕ້ອນຮັບສະຖານະການເຂົ້າເມືອງທັງໝົດ!
ໂຄງການນີ້ແມ່ນສຳລັບທຸກຄົນ, ບໍ່ວ່າຈະມີເອກະສານບັນທຶກ ຫຼື ບໍ່.

## ຄວາມປອດໄພຂອງທ່ານເປັນສິ່ງສຳຄັນສຳລັບພວກເຮົາ:

- ການຂໍປະກັນສຸຂະພາບຈະບໍ່ສົ່ງຜົນກະທົບຕໍ່ສະຖານະການເຂົ້າເມືອງ ຫຼື ການສະໝັກຂໍຄວາມເປັນພົນລະເມືອງສຳລັບທ່ານ, ຄອບຄົວຂອງທ່ານ ຫຼື ຄົນໃດກໍ່ຕາມທີ່ອາໄສກັບທ່ານ.
- ຂໍ້ມູນສ່ວນບຸກຄົນຂອງທ່ານແມ່ນຈະບໍ່ຖືກໃຊ້ສຳລັບຈຸດປະສົງບັງຄັບໃຊ້ກົດໝາຍການເຂົ້າເມືອງ.
- ຂໍ້ມູນກ່ຽວກັບສະຖານະການເຂົ້າເມືອງຂອງທ່ານແມ່ນຈະຖືກໃຊ້ເພື່ອກຳນົດວ່າທ່ານມີສິດຊື້ແຜນປະກັນສຸຂະພາບຫຍັງເທົ່ານັ້ນ.

washington healthplanfinder
click. compare. covered.

## ປະກັນສຸຂະພາບແມ່ນຫຍັງ?

ປະກັນສຸຂະພາບແມ່ນຂໍ້ຕົກລົງທີ່ທ່ານມີກັບບໍລິສັດປະກັນໄພ. ບໍລິສັດປະກັນໄພເຫັນດີທີ່ຈະຈ່າຍເງິນບາງສ່ວນ ຫຼື ທັງໝົດສຳລັບຄ່າໃຊ້ຈ່າຍປະຈຳເດືອນຂອງທ່ານ ເພື່ອແລກປ່ຽນກັບເງິນທີ່ທ່ານຕ້ອງຈ່າຍໃນແຕ່ລະເດືອນ (ເບ້ຍປະກັນ).

## ເປັນຫຍັງຈຶ່ງຕ້ອງມີປະກັນສຸຂະພາບ?

ປະກັນສຸຂະພາບຈະຊ່ວຍຈ່າຍເງິນສຳລັບຄ່າໃຊ້ຈ່າຍໃນການດູແລເບິ່ງແຍງສຸຂະພາບ ບໍ່ວ່າທ່ານຈະໃຊ້ມັນເພື່ອມີສຸຂະພາບດີ ຫຼື ໃຊ້ມັນ ເມື່ອທ່ານເຈັບປ່ວຍ.

## ມັນມີຕົ້ນທຶນເທົ່າໃດ?

ຕົ້ນທຶນຂອງການຊື້ປະກັນສຸຂະພາບແມ່ນຂຶ້ນກັບປັດໃຈຕ່າງໆ ເຊັ່ນ: ລາຍໄດ້ຂອງທ່ານ, ຂະໜາດຄອບຄົວ ແລະ ບ່ອນທີ່ທ່ານອາໄສ.

ທ່ານອາດເຂົ້າເກນສຳລັບ **Cascade Care Savings**, ເຊິ່ງໝາຍຄວາມວ່າລັດຈະຈ່າຍເງິນສຳລັບສ່ວນໜຶ່ງໃນປະກັນສຸຂະພາບຂອງທ່ານ. ຖ້າທ່ານເຂົ້າເກນ, ຈຳນວນເງິນທີ່ທ່ານຕ້ອງຈ່າຍສຳລັບການດູແລເບິ່ງແຍງສຸຂະພາບແມ່ນຈະໜ້ອຍລົງ.

## ປະກັນສຸຂະພາບເຮັດວຽກແນວໃດ?

ທ່ານຈະຈ່າຍເບ້ຍປະກັນປະຈຳເດືອນ ໃນກໍລະນີທີ່ທ່ານຕ້ອງການການດູແລເບິ່ງແຍງສຸຂະພາບ. ຈາກນັ້ນຖ້າທ່ານຕ້ອງການການບໍລິການດູແລເບິ່ງແຍງສຸຂະພາບ, ການບໍລິການເຫຼົ່ານີ້ແມ່ນຈະຖືກຮຽກເກັບກັບທ່ານໃນອັດຕາສ່ວນຫຼຸດ.

## ຄຳສັບປະກັນສຸຂະພາບ

### ເບ້ຍປະກັນ

ສະມາຊິກແຕ່ລະຄົນຈະຈ່າຍຄ່າທຳນຽມປະຈຳເດືອນທີ່ເອີ້ນວ່າ ເບ້ຍປະກັນ. ລາຄາເບ້ຍປະກັນຂອງທ່ານແມ່ນຂຶ້ນກັບແຜນປະກັນສຸຂະພາບຂອງທ່ານ.

### ເງິນທີ່ຕ້ອງຈ່າຍກ່ອນ

ປະກັນສຸຂະພາບຂອງທ່ານຈະເລີ່ມຊ່ວຍຈ່າຍເງິນສຳລັບໃບຮຽກເກັບເງິນຂອງທ່ານ ຫຼັງຈາກທີ່ທ່ານ "ເຂົ້າເກນຈຳນວນເງິນທີ່ທ່ານຕ້ອງຈ່າຍກ່ອນ". ທຸກແຜນປະກັນຈະຈ່າຍເງິນສຳລັບການດູແລເບິ່ງແຍງປ້ອງກັນກ່ອນທີ່ຈະເຂົ້າເກນຈຳນວນເງິນທີ່ທ່ານຕ້ອງຈ່າຍກ່ອນ.

### ເງິນຮ່ວມຈ່າຍ ແລະ ເງິນປະກັນໄພຮ່ວມ

ສິ່ງເຫຼົ່ານີ້ແມ່ນຄ່າໃຊ້ຈ່າຍທີ່ທ່ານຕ້ອງຈ່າຍເມື່ອທ່ານເຂົ້າພົບທ່ານໝໍ. ເງິນຮ່ວມຈ່າຍຂອງທ່ານແມ່ນຈຳນວນຄົງທີ່ ($1-$50). ເງິນປະກັນໄພຮ່ວມຂອງທ່ານແມ່ນອັດຕາສ່ວນຮ້ອຍຂອງຄ່າໃຊ້ຈ່າຍການບໍລິການ. ແຜນປະກັນສຸຂະພາບຂອງທ່ານຈະຈ່າຍເງິນສຳລັບການເຂົ້າພົບສ່ວນທີ່ເຫຼືອຂອງທ່ານ.

### ຕົວຢ່າງໃບຮຽກເກັບເງິນ

ທ່ານເຈັບປ່ວຍ ແລະ ຕ້ອງການການດູແລເບິ່ງແຍງທາງການແພດ.
ໃບຮຽກເກັບເງິນທາງການແພດຂອງທ່ານແມ່ນ $10,000.

ທ່ານບໍ່ມີປະກັນໄພ.
***ຈຳນວນເງິນທັງໝົດທີ່ທ່ານຕ້ອງຈ່າຍ (ຕົວຈິງ): $10,000***

ດ້ວຍປະກັນໄພ, ທ່ານຈະຈ່າຍເງິນໜ້ອຍລົງ.
ປະກັນໄພຈ່າຍ: $7,960
***ຈຳນວນເງິນທັງໝົດທີ່ທ່ານຕ້ອງຈ່າຍ (ຕົວຈິງ): $2,040***

- *ເງິນທີ່ຕ້ອງຈ່າຍກ່ອນ: $2,000*
- *ເງິນຮ່ວມຈ່າຍ: $40*

## ມີແຜນປະກັນສຸຂະພາບ-ຫຍັງທີ່ພ້ອມໃຫ້ບໍລິການ?

ມີແຜນປະກັນສຸຂະພາບສາມລະດັບທີ່ພ້ອມໃຫ້ບໍລິການຜ່ານ *Washington Healthplanfinder.* ທອງແດງ, ເງິນ ແລະ ຄຳ.
ຈຳນວນເງິນທີ່ບໍລິສັດປະກັນສຸຂະພາບຂອງທ່ານຈະຈ່າຍແມ່ນຂຶ້ນກັບລະດັບທີ່ທ່ານເລືອກ. ໂດຍທົ່ວໄປແລ້ວ, ແຜນປະກັນປະເພດທອງແດງຈະຈ່າຍປະມານ 60%, ແຜນປະກັນປະເພດເງິນຈະຈ່າຍປະມານ 70% ແລະ ແຜນປະກັນປະເພດຄຳຈະຈ່າຍປະມານ 80% ຂອງໃບຮຽກເກັບເງິນທາງການແພດຂອງທ່ານ.

### ທອງແດງ

ແຜນປະກັນເຫຼົ່ານີ້ມີຕົ້ນທຶນໜ້ອຍກວ່າໃນແຕ່ລະເດືອນ ແຕ່ຈະຈ່າຍເງິນໜ້ອຍກວ່າສຳລັບຄ່າໃຊ້ຈ່າຍເມື່ອທ່ານຕ້ອງການການດູແລເບິ່ງແຍງ.

### ເງິນ

ແຜນປະກັນເຫຼົ່ານີ້ຄອບຄຸມຄ່າໃຊ້ຈ່າຍໄດ້ຫຼາຍຂຶ້ນ ເມື່ອທ່ານຕ້ອງການການດູແລເບິ່ງແຍງ ແຕ່ອາດມີຕົ້ນທຶນສູງກວ່າ. ຖ້າທ່ານເຂົ້າເກນສຳລັບ Cascade Care Savings, ແຜນປະກັນເຫຼົ່ານີ້ອາດມີຕົ້ນທຶນໜ້ອຍກວ່າແຜນປະກັນປະເພດທອງແດງ.

### ຄຳ

ແຜນປະກັນເຫຼົ່ານີ້ມີຕົ້ນທຶນຫຼາຍຂຶ້ນຕໍ່ເດືອນ ແຕ່ຈະຈ່າຍເງິນຫຼາຍຂຶ້ນສຳລັບຄ່າໃຊ້ຈ່າຍ ເມື່ອທ່ານຕ້ອງການການດູແລເບິ່ງແຍງ. ຖ້າທ່ານເຂົ້າເກນສຳລັບ Cascade Care Savings ແລະ ມີຄວາມຕ້ອງການດ້ານການດູແລເບິ່ງແຍງສຸຂະພາບຫຼາຍ, ແຜນປະກັນເຫຼົ່ານີ້ອາດເໝາະສົມດີ.

## ຊອກຫາໂລໂກ້ຂອງ Cascade Care!

ແຜນປະກັນ Cascade Care ຈະໃຫ້ຄຸນຄ່າຫຼາຍຂຶ້ນໃນຕົ້ນທຶນທີ່ຕ່ຳລົງ. ນັ້ນໝາຍຄວາມວ່າ ເງິນເບ້ຍປະກັນຂອງທ່ານຈະໄດ້ເຮັດໃຫ້ທ່ານໄດ້ຮັບຫຼາຍກວ່າເມື່ອກ່ອນ!